ກອງປະຊຸມໃຫຍ່ ເດືອນເມສາ 2012

**ເມື່ອເຮົາປິດກອງປະຊຸມນີ້**

ໂດຍ ປະທານທອມມັສ ແອັສ ມອນສັນ

ຫົວໃຈຂອງຂ້າພະເຈົ້າເຕັມປ່ຽມ ເມື່ອເຮົາມາເຖິງທ້າຍກອງປະຊຸມອັນດີເດັ່ນນີ້. ເຮົາໄດ້ຮັບພອນຫລາຍເມື່ອເຮົາໄດ້ຍິນຄຳແນະນຳ ແລະ ປະຈັກພະຍານຂອງຜູ້ທີ່ໄດ້ກ່າວກັບເຮົາ. ຂ້າພະເຈົ້າຄິດວ່າທ່ານຈະເຫັນດ້ວຍກັບຂ້າພະເຈົ້າ ວ່າເຮົາໄດ້ຮູ້ສຶກພຣະວິນຍານຂອງພຣະຜູ້ເປັນເຈົ້າ ເມື່ອຫົວໃຈຂອງເຮົາໄດ້ຮັບການສຳພັດ ແລະ ປະຈັກພະຍານຂອງເຮົາໄດ້ຖືກເຮັດໃຫ້ເຂັ້ມແຂງຂຶ້ນ.

ອີກເທື່ອໜຶ່ງເຮົາມີຄວາມປະທັບໃຈກັບສຽງເພງທີ່ມ່ວນອອນຊອນ, ຊຶ່ງໄດ້ສ້າງບັນຍາກາດດີໃຫ້ແກ່ກອງປະຊຸມແຕ່ລະພາກ. ຂ້າພະເຈົ້າຂໍສະແດງຄວາມກະຕັນຍູຕໍ່ທຸກຄົນຜູ້ໄດ້ແບ່ງປັນພອນສະຫວັນຂອງເຂົາເຈົ້າໃນເລື່ອງນີ້.

ຂ້າພະເຈົ້າມີຄວາມປະທັບໃຈຫລາຍກັບຜູ້ທີ່ໄດ້ກ່າວປາໄສກັບພວກເຮົາ ຕະຫລອດທັງຜູ້ທີ່ໄດ້ກ່າວຄຳອະທິຖານໃນແຕ່ລະພາກ.

ມີຜູ້ຄົນຢ່າງຫລວງຫລາຍທີ່ໄດ້ໃຫ້ການຊ່ອຍເຫລືອກອງປະຊຸມ ທຸກເທື່ອຢູ່ຂ້າງໃນໂດຍບໍ່ມີໃຜຮູ້. ຄົງເປັນໄປບໍ່ໄດ້ ຖ້າປາດສະຈາກຄວາມຊ່ອຍເຫລືອຂອງເຂົາເຈົ້າ. ຂ້າພະເຈົ້າຂໍຂອບໃຈນຳທຸກໆຄົນເຫລົ່ານັ້ນ.

ຂ້າພະເຈົ້າຮູ້ວ່າທ່ານກໍມີຄວາມກະຕັນຍູຮ່ວມກັບຂ້າພະເຈົ້າຕໍ່ບັນດາອ້າຍເອື້ອຍນ້ອງທີ່ໄດ້ຖືກປົດຈາກຕຳແໜ່ງໃນກອງປະຊຸມນີ້. ພວກເພິ່ນໄດ້ເສຍສະລະຢ່າງຫລວງຫລາຍໃນວຽກງານຂອງພຣະຜູ້ເປັນເຈົ້າ ແລະ ຄົນລຸ້ນຕໍ່ໆໄປຈະຮູ້ສຶກຄືກັນ.

ພ້ອມນີ້ ພວກເຮົາກໍໄດ້ສະໜັບສະໜູນບັນດາອ້າຍເອື້ອຍນ້ອງຜູ້ໄດ້ຖືກເອີ້ນສູ່ຕຳແໜ່ງໃໝ່ຂອງພວກເພິ່ນໃນກອງປະຊຸມນີ້ດ້ວຍການຍົກມືຂຶ້ນ. ພວກເຮົາຂໍຕ້ອນຮັບພວກເພິ່ນ ແລະ ຢາກໃຫ້ພວກເພິ່ນຮູ້ວ່າ ພວກເຮົາ

ມີຄວາມຕື່ນເຕັ້ນທີ່ຈະໄດ້ຮັບໃຊ້ຮ່ວມກັບພວກເພິ່ນໃນອຸດົມການຂອງພຣະອາຈານ. ພວກເພິ່ນໄດ້ຖືກເອີ້ນສູ່ຕໍາແໜ່ງຂອງພວກເພິ່ນໂດຍການດົນໃຈຈາກເບື້ອງບົນ.

ພວກເຮົາໄດ້ຖ່າຍທອດກອງປະຊຸມນີ້ຢ່າງກວ້າງໄກ, ຕະຫລອດທຸກທະວີບ, ຂ້າມນ້ຳຂ້າມທະເລ ໄປເຖິງຜູ້ຄົນຢູ່ໃນທຸກຫົນທຸກແຫ່ງ. ເຖິງແມ່ນພວກເຮົາຈະຢູ່ຫ່າງໄກຈາກຫລາຍຄົນພວກທ່ານ, ແຕ່ພວກເຮົາກໍມີຄວາມຮັກ ແລະ ມີຄວາມກະຕັນຍູຕໍ່ທ່ານ ບໍ່ວ່າທ່ານຈະອາໄສຢູ່ບ່ອນໃດກໍຕາມ.

ຈົ່ງແມ່ນເປັນພອນແທ້ໆ, ອ້າຍເອື້ອຍນ້ອງທັງຫລາຍ, ທີ່ມີພຣະກິດຕິຄຸນຂອງພຣະເຢຊູຄຣິດໃນຊີວິດ ແລະໃນຫົວໃຈຂອງເຮົາ. ມັນຕອບຄຳຖາມອັນສຳຄັນທີ່ສຸດກ່ຽວກັບຊີວິດ. ມັນເປັນຫລັກຖານເຖິງຄວາມໝາຍ ແລະ ຈຸດປະສົງ ແລະ ໃຫ້ຄວາມຫວັງແກ່ຊີວິດຂອງເຮົາ.

ເຮົາມີຊີວິດຢູ່ໃນວັນເວລາທີ່ຫຍຸ້ງຍາກ. ຂ້າພະເຈົ້າແນ່ໃຈວ່າ ພຣະບິດາເທິງສະຫວັນຮູ້ເຖິງການທ້າທາຍທີ່ເຮົາປະເຊີນຢູ່. ພຣະອົງຮັກເຮົາທຸກຄົນ ແລະ ຢາກປະທານພອນໃຫ້ເຮົາ ແລະ ຢາກຊ່ອຍເຫລືອເຮົາ. ຂໍໃຫ້ເຮົາຈົ່ງເອີ້ນຫາພຣະອົງໃນຄຳອະທິຖານ, ຕາມທີ່ພຣະອົງໄດ້ແນະນຳເມື່ອພຣະອົງບອກໃຫ້ເຮົາອະທິຖານສະເໝີ ແລ້ວພຣະອົງຈະຖອກເທພຣະວິນຍານຂອງພຣະອົງລົງມາເທິງເຮົາ, ແລະ ພອນຂອງເຮົາຈະຍິ່ງໃຫຍ່—ແທ້ຈິງແລ້ວ, ແມ່ນແຕ່ຫລາຍກວ່າທີ່ເຮົາຈະໄດ້ຮັບຊັບສົມບັດຂອງແຜ່ນດິນໂລກ ແລະຄວາມເສື່ອມໂຊມທີ່ມີຢູ່ໃນນັ້ນ.[1]

ອ້າຍເອື້ອຍນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂໍໃຫ້ບ້ານເຮືອນຂອງທ່ານຈົ່ງເຕັມໄປດ້ວຍຄວາມຮັກ ແລະຄວາມເຫັນອົກເຫັນໃຈກັນ ແລະ ດ້ວຍວິນຍານຂອງພຣະຜູ້ເປັນເຈົ້າ. ຈົ່ງຮັກຄອບຄົວຂອງທ່ານ. ຖ້າຫາກມີການຜິດຖຽງກັນ ແລະ ການຄັດແຍ້ງກັນຢູ່ໃນບັນດາພວກທ່ານ, ຈົ່ງແກ້ໄຂມັນໃຫ້ຮຽບຮ້ອຍໃນຕອນນີ້. ພຣະຜູ້ຊ່ອຍໃຫ້ລອດໄດ້ກ່າວວ່າ:

"ຈະບໍ່ມີການໂຕ້ຖຽງກັນໃນບັນດາພວກເຈົ້າ. …

"ເພາະຕາມຈິງ, ຕາມຈິງແລ້ວເຮົາກ່າວກັບເຈົ້າ, ຜູ້ທີ່ມີວິນຍານແຫ່ງການຂັດແຍ້ງນັ້ນບໍ່ໄດ້ມາຈາກເຮົາ, ແຕ່ມາຈາກມານ, ຜູ້ເປັນບິດາຂອງການຂັດແຍ້ງ ແລະ ມັນໄດ້ຍຸຍົງໃຈຂອງມະນຸດໃຫ້ຂັດແຍ້ງກັນດ້ວຍຄວາມຄຽດແຄ້ນ.

"[ແຕ່] ຈົ່ງເບິ່ງ, ນີ້ບໍ່ແມ່ນຄຳສອນຂອງເຮົາ … ; ແຕ່ *ນີ້* ເປັນຄຳສອນຂອງເຮົາຄື ຄວນໃຫ້ເລື່ອງເຊັ່ນນັ້ນໝົດໄປ."[2]

ໃນຖານະທີ່ເປັນຜູ້ຮັບໃຊ້ທີ່ຖ່ອມຕົນຂອງທ່ານ, ຂ້າພະເຈົ້າຂໍກ່າວເຖິງຖ້ອຍຄຳຂອງກະສັດເບັນຢາມິນ ທີ່ໄດ້ກ່າວກັບຜູ້ຄົນຂອງເພິ່ນດັ່ງນີ້:

"ຂ້າພະເຈົ້າບໍ່ໄດ້ສັ່ງໃຫ້ພວກທ່ານຂຶ້ນມາ … ເພື່ອພວກທ່ານຈະຄິດວ່າ ຕົວຂ້າພະເຈົ້າເອງຍິ່ງໃຫຍ່ກວ່າມະນຸດ.

"ແຕ່ຂ້າພະເຈົ້າກໍຄືກັນກັບຕົວຂອງພວກທ່ານທີ່ຕ້ອງຂຶ້ນຢູ່ກັບຈຸດອ່ອນທຸກຢ່າງໃນຮ່າງກາຍ ແລະ ຈິດໃຈ; ເຖິງຢ່າງໃດກໍຕາມ ຂ້າພະເຈົ້າກໍໄດ້ຖືກເລືອກ … ຈາກພຣະຫັດຂອງພຣະຜູ້ເປັນເຈົ້າ … ແລະ ໄດ້ຮັບການຮັກສາ ແລະ ປົກປ້ອງໂດຍອຳນາດອັນຫາທີ່ປຽບບໍ່ໄດ້ຂອງພຣະອົງ, ທີ່ໃຫ້ຮັບໃຊ້ພຣະອົງດ້ວຍສຸດຄວາມສາມາດ, ສຸດຄວາມຄິດ, ແລະ ສຸດກຳລັງ ຊຶ່ງພຣະຜູ້ເປັນເຈົ້າໄດ້ປະທານໃຫ້ແກ່ຂ້າພະເຈົ້າ.[3]

ອ້າຍເອື້ອຍນ້ອງທີ່ຮັກແພງຂອງຂ້າພະເຈົ້າ, ຂ້າພະເຈົ້າມີຄວາມປາຖະໜາຈິນສຸດຫົວໃຈທີ່ຈະເຮັດຕາມພຣະປະສົງຂອງພຣະເຈົ້າ ແລະ ຮັບໃຊ້ພຣະອົງ ແລະ ຮັບໃຊ້ທ່ານ.

ບັດນີ້ ເມື່ອເຮົາຈາກກອງປະຊຸມນີ້ໄປ, ຂ້າພະເຈົ້າຂໍມອບພອນຈາກສະຫວັນໃຫ້ແກ່ທ່ານແຕ່ລະຄົນ. ຂໍໃຫ້ທ່ານຜູ້ທີ່ບໍ່ໄດ້ຢູ່ບ້ານ ຈົ່ງກັບໄປບ້ານດ້ວຍຄວາມປອດໄພ. ຂໍໃຫ້ທ່ານຈົ່ງໄຕ່ຕອງ ເຖິງຄວາມຈິງທີ່ທ່ານໄດ້ຍິນ, ຂໍໃຫ້ມັນຊ່ວຍທ່ານກາຍເປັນຄົນດີກວ່າສອງມື້ທີ່ຜ່ານມາ.

ຈົນກວ່າເຮົາຈະມາພົບກັນອີກໃນຫົກເດືອນຂ້າງໜ້າ, ຂ້າພະເຈົ້າຂໍໃຫ້ພອນຂອງພຣະຜູ້ເປັນເຈົ້າມາສູ່ທ່ານ, ແລະ ມາສູ່ເຮົາທຸກຄົນ, ແລະ ຂ້າພະເຈົ້າຂໍກ່າວມາໃນພຣະນາມອັນສັກສິດຂອງພຣະອົງ—ແມ່ນແຕ່ພຣະເຢຊູຄຣິດ ພຣະຜູ້ເປັນເຈົ້າ ແລະ ພຣະຜູ້ຊ່ອຍໃຫ້ລອດຂອງເຮົາ—ອາແມນ.

ແຫລ່ງອ້າງອີງ


1. ເບິ່ງ Doctrine and Covenants 19:38.
2. 3 ນີໄຟ 11:28–30; ເນັ້ນຄຳເນີ້ງ.
3. ໂມໄຊຢາ 2:10–11.